ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຂະແໜງທະນາຄານແຂ່ງຂັນກິລາເປຕັງ ຕ້ອນຮັບກອງປະຊຸມໃຫຍ່ ຄັ້ງທີ IV ອົງຄະນະພັກ ທຫລ




ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ທີ່ຈະເປີດຂຶ້ນໃນມໍ່ໆນີ້; ຄະນະພັກ-ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງການແຂ່ງຂັນກິລາມວນຊົນ (ກິລາເປຕັງ) ໃນວັນທີ 1 ສິງຫາ 2020 ທີ່ສະໜາມກິລາເປຕັງ (ຊີເກມ) ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ; ບັນດາສະຫາຍຄະນະປະຈຳພັກ-ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ບັນດາຄະນະກົມທະນາຄານແຫ່ງ ສປປ ລາວ-ຄະນະຜູ້ອຳນວຍການທະນາຄານທຸລະກິດ ແລະ ນັກກິລາ ເຂົ້າຮ່ວມ.

ການແຂ່ງຂັນ ໄດ້ດຳເນີນໄປຕັ້ງແຕ່ຕອນເຊົ້າ ໂດຍການໃຫ້ກຽດເປີດສະໜາມຂອງຄູ່ກິດຕິມະສັກ ໃນນັ້ນປະກອບມີ ທີມປະສົມຊາຍ-ຍິງຄື: ຄູ່ທີໜຶ່ງໂດຍມີທ່ານ ສອນໄຊ ສິດພະໄຊ, ທ່ານນາງ ວັດທະນາ ດາລາລອຍ ແລະ ທ່ານ ຄຳພຸດ ສິດທິລາດ ພົບກັບທີມຂອງທ່ານ ຄຳວົງ ທິບພະວົງ, ທ່ານ ພຸດທະໄຊ ສີວິໄລ ແລະ ທ່ານນາງ ຂັນແກ້ວ ຫຼ້າມະນີເງົາ; ສຳລັບຄູ່ທີ່ສອງ ປະກອບມີທ່ານ ພານຸສັກ ແກ່ນວົງພະຈັນ, ທ່ານ ພູຊົງ ຈັນທະຈັກ ແລະ ທ່ານນາງ ແສງດາວວີ ວົງຄຳຊາວ ພົບກັບທີມຂອງທ່ານນາງ ສາຍສະໝອນ ຈັນທະຈັກ, ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ແລະ ທ່ານ ຄຳສິງ ແກ້ວມະຫາວົງ; ສ່ວນຜົນການແຂ່ງຂັນນັ້ນ, ຄະນະກຳມະການກາງໄດ້ບອກວ່າ: ບໍ່ມີຝ່າຍໃດໄດ້ ຫຼື ເສຍ, ເປັນການແຂ່ງຂັນກິລາມິດຕະພາບ.

  

ສໍາລັບການແຂ່ງຂັນກິລາເປຕັງຂອງທີມຍິງ ແລະ ທີມຊາຍ ກໍ່ໄດ້ດໍາເນີນການແຂ່ງຂັນກັນຢ່າງຟົດຟື້ນ ໂດຍຜ່ານການຕີແບບຄັດເລືອກມາເປັນລໍາດັບ ຊຶ່ງສິ່ງຜົນໃຫ້ມີຫຼາຍທີມຜ່ານເຂົ້າມາຮອບຕັດເຊືອກ ໂດຍມີທີມທີ່ຊະນະເລີດປະເພດຊາຍໄດ້ແກ່ທີມທະນາຄານອຸດສາຫະກໍາ ແລະ ການຄ້າ ຈີນ ຈໍາກັດ ສາຂານະຄອນຫຼວງວຽງຈັນ (ICBC) ແລະ ປະເພດຍິງ ໄດ້ແກ່ສໍານັກງານປົກປ້ອງເງິນຝາກ ໂດຍການໃຫ້ກຽດມອບຂອງທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ຮອງຊະນະເລີດ ປະເພດຊາຍໄດ້ແກ່ທະນາຄານຮ່ວມທຸລະກິດ ລາວ-ຫວຽດ ແລະ ປະເພດຍິງໄດ້ແກ່ທະນາຄານແຫ່ງ ສປປ ລາວ ແລະ ປະເພດ 3 ປະເພດຊາຍໄດ້ແກ່ທະນາຄານນະໂຍບາຍ+ສໍານັກງານປົກປ້ອງເງິນຝາກ ແລະ ປະເພດຍິງໄດ້ແກ່ ທະນາຄານອຸດສາຫະກໍາ ແລະ ການຄ້າ ຈີນ ຈໍາກັດ ສາຂານະຄອນຫຼວງວຽງຈັນ+ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມພົດ ທໍາມະວົງ, ວັນປະເສີດ ສົມບູນຂັນ**